ບໍລິສັດ ດັກລັກ ຣັບເບີ ຈຳກັດ
DAKLAORUCO
**DAK LAK RUBBER COMPANY.,LTD (DAKLAORUCO)**
**Address: Thaluong Village - Pakse District - Champasak Province - Lao PDR**
**Tel: 00856 31 21 25 70; Fax: 00856 31 25 29 82**
**Email: daklaoruco.lao@gmail.com Website: http://www.daklaoruco.com**

ເລກທີ: 03/ລງ- FSC *ປາກເຊ, ວັນທີ 20 ເດືອນ 01 ປີ 2025*

# ບົດລາຍງານ
# ວ່າດ້ວຍການຈັດຕັ້ງປະຕິບັດກົດລະບຽບການເບິ່ງແຍງສຸຂະພາບ
# ແລະ ຄວາມປອດໄພແຮງງານ ປີ 2024

- ອີງຕາມກົດຫມາຍວ່າດ້ວຍ ແຮງງານ ສະບັບເລກທີ 43/ສພຊ (ສະບັບປັບປຸງ) ລົງວັນທີ 24/12/2013 ອອກໂດຍສະພາແຫ່ງຊາດ ຂອງ ສປປ ລາວ;
- ອີງຕາມມາດຕະຖານແຫ່ງຊາດສະບັບ ຊົ່ວຄາວສຳລັບການປະເມີນປ່າໄມ້ ຂອງ ສປປ ລາວ (FSC-STD-LAO-01-2020);
- ອີງຕາມກົດລະບຽບສະບັບເລກທີ 08/ລບ- ບສ ລົງວັນທີ 27/06/2023 ຂອງຜູ້ອຳນວຍການບໍລິສັດ ວ່າດ້ວຍ ການເບິ່ງແຍງສຸຂະພາບແລະຄວາມປອດໄພແຮງງານ;
- ອີງຕາມກົດລະບຽບແຮງງານສະບັບເລກທີ 510 ລົງວັນທີ 27/02/2024 ຂອງບໍລິສັດ.
- ອີງຕາມບົດບາດແລະໜ້າທີ່ ຂອງຄະນະ FSC ຂອງບໍລິສັດ;
- ອີງຕາມສະພາບຕົວຈິງຂອງ ບໍລິສັດ.

ຄະນະ FSC ຂອງບໍລິສັດລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍການເບິ່ງແຍງສຸຂະພາບ ແລະຄວາມປອດໄພແຮງງານ ປີ 2024 ດັ່ງຕໍ່ໄປນີ້:

ເພື່ອຮັບປະກັນສິດ, ພັນທະ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານ, ຮັບປະກັນການເຄື່ອນໄຫວຂອງບໍລິສັດປະຕິບັດຕາມກົດໝາຍ ແລະ ສົນທິສັນຍາສາກົນ, ກໍຄືປະຕິບັດຕາມມາດຕະຖານແຫ່ງຊາດສະບັບຊົ່ວຄາວ ສຳລັບການປະເມີນປ່າໄມ້ ຂອງ ສປປ ລາວ (FSC-STD-LAO-01-2020). ບໍລິສັດໄດ້ອອກກົດລະບຽບເລກທີ 08/ລບ- ບສ ລົງວັນທີ 27/06/2023 ຂອງຜູ້ອຳນວຍການບໍລິສັດ ວ່າດ້ວຍ ການເບິ່ງແຍງສຸຂະພາບ ແລະ ຄວາມປອດໄພແຮງງານ.

## 1. ຜົນການຈັດຕັ້ງປະຕິບັດກົດລະບຽບ:

**1.1 ຈັດຕັ້ງປະຕິບັດການເຜີຍແຜ່, ໂຄສະນາໃຫ້ທັງໝົດພະນັກງານກຳມະກອນ, ຜູ້ອອກແຮງງານ ແລະຊຸມຊົນທ້ອງຖິ່ນ ຮັບຮູ້ກ່ຽວກັບ:**

***1.1.1. ເນື້ອໃນການເບິ່ງແຍງສຸຂະພາບ ແລະ ຄວາມປອດໄພແຮງງານ***

- ເປົ້າໝາຍທີ່ນຳໃຊ້: ບັນດາອົງການຈັດຕັ້ງ, ບຸກຄົນທີ່ໄດ້ເຊັນສັນຍາເສດຖະກິດ ຫຼື ສັນຍາແຮງງານກັບບໍລິສັດທີ່ຍັງບໍ່ທັນໝົດອາຍຸ.
- ຢູ່ຕາມສະຖານທີ່ເຮັດວຽກຖ້າມີປັດໃຈເຮັດໃຫ້ເກີດອັນຕະລາຍຕ້ອງມີລະບຽບເປັນລາຍລັກອັກສອນຢ່າງຈະແຈ້ງ ແລະ ວາງໄວ້ໃນບ່ອນທີ່ເຫັນໄດ້ງ່າຍ ເພື່ອໃຫ້ຜູ້ອອກແຮງງານຮັບຮູ້ ແລະ ຫຼີກເວັ້ນ.

- ບໍລິສັດຈະຈັດຕັ້ງການໂຄສະນາເຜີຍແຜ່, ແນະນຳ ແລະ ຝຶກອົບຮົມໃຫ້ແກ່ຜູ້ອອກແຮງງານກ່ຽວກັບການເບິ່ງແຍງສຸຂະພາບ ແລະ ຄວາມປອດໄພແຮງງານ ໃນແຕ່ລະປີ.

- ບໍລິສັດ ປະຕິບັດການກວດກາສະພາບແວດລ້ອມໃນການເຮັດວຽກ (ຖ້າມີ) ແລະ ການກວດສຸຂະພາບປະຈຳປີ ໃຫ້ແກ່ຜູ້ອອກແຮງງານໃນແຕ່ລະປີ.

- ປະຕິບັດການປະເມີນ, ປິ່ນປົວ, ແລະ ຟື້ນຟູສຸຂະພາບຂອງຜູ້ອອກແຮງງານທີ່ເກີດອຸບັດເຫດແຮງງານແລະ ພະຍາດອາຊີບ. ສຳລັບຜູ້ທີ່ເຮັດວຽກຢູ່ໃນສະພາບແວດລ້ອມທີ່ເປັນພິດ, ຈະໄດ້ຮັບການຊົດເຊີຍເປັນເງິນ ຫຼື ດ້ວຍວັດຖຸສິ່ງຂອງປະເພດຕ່າງໆ ຕາມລະບຽບການຂອງລັດ.

ບໍລິສັດຕ້ອງຮັບປະກັນໃຫ້ມີສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມຢ່າງພຽງພໍເຊັ່ນ: ນ້ຳສະອາດພຽງພໍ, ມີບ່ອນອາບນ້ຳ, ສະຖານທີ່ພັກຜ່ອນ ແລະ ຫ້ອງອາຫານທີ່ສະອາດ, ມີຖົງຢາປະຖົມພະຍາບານຂັ້ນຕົ້ນເພື່ອຮັບໃຊ້ຜູ້ອອກແຮງງານ.

*1.1.2 ມາດຕະການເພື່ອຮັບປະກັນຄວາມປອດໄພແຮງງານ*

- ຜູ້ອອກແຮງງານໄດ້ຮັບການແນະນຳ, ຝຶກອົບຮົມເຕັກນິກການປະຕິບັດ, ຝຶກອົບຮົມປະຖົມພະຍາບານກໍລະນີເກີດອຸບັດເຫດແຮງງານ, ຝຶກອົບຮົມການຕອບໂຕ້ສະຖານະການສຸກເສີນເຊັ່ນ: ໄຟໄໝ້, ລະເບີດ, ສານເຄມີຮົ່ວໄຫຼ ກ່ອນການມອບໝາຍວຽກງານ.

- ມີອຸປະກອນປ້ອງກັນແຮງງານທີ່ເໝາະສົມກັບແຕ່ລະຕຳແໜ່ງງານເຊັ່ນ: ຈັກຕັດໄມ້ດ້ວຍແອັດຊັງ, ສີດຢາປາບສັດຕູພືດ, ສານເຄມີ...

- ມີຖົງຢາປະຖົມພະຍາບານຂັ້ນຕົ້ນຢູ່ໃນບ່ອນຜະລິດ, ເທິງລົດຂົນສົ່ງ, ພ້ອມດ້ວຍຢາທີ່ຈຳເປັນ ແລະເຄື່ອງມືຊ່ວຍປະຖົມພະຍາບານ ລວມໄມ້ດາມ ແລະ ສຳລີແຜ່ນ.

- ຕິດຕັ້ງປ້າຍ, ປ້າຍເຕືອນໄພ ຫຼື/ ແລະ ຈັດພະນັກງານຍາມສະຖານທີ່ຊຸດຄົ້ນໄມ້.

- ກໍລະນີເກີດອຸປະຕິເຫດ, ຜູ້ອອກແຮງງານທີ່ເກີດອຸປະຕິເຫດຕ້ອງໄດ້ປະຖົມພະຍາບານທັນທີຢູ່ບ່ອນເກີດເຫດ ແລະ ຮີບຟ້າວນຳໄປໂຮງໝໍທີ່ໃກ້ທີ່ສຸດ.

- ພະນັກງານຄຸມງານຕ້ອງກວດກາ,ຕັກເຕືອນຜູ້ອອກແຮງງານໃນເວລາເຮັດວຽກຕ້ອງເອົາໃຈໃສ່ເຖິງຄວາມປອດໄພເປັນປະຈຳ.

***1.1.3 ມາດຕະການແກ້ໄຂການລະເມີດກ່ຽວກັບການເບິ່ງແຍງສຸຂະພາບ ແລະ ຄວາມປອດໄພແຮງງານ***

- ຜູ້ອຳນວຍການນິຄົມ, ຫົວໜ້າຫ້ອງເຕັກນິກ-ຜະລິດຂອງບໍລິສັດ, ຫົວໜ້າຫ້ອງການບໍລິສັດ ມີໜ້າທີ່ຕິດຕາມກວດກາ, ແຕ່ງຕັ້ງພະນັກງານງານຕິດຕາມກວດກາບັນດາການເຄື່ອນໄຫວຂອງວຽກງານຄຸ້ມຄອງປ່າໄມ້. ຖ້າພົບເຫັນກໍລະນີທີ່ການລະເມີດ, ຈະຕ້ອງລາຍງານໃຫ້ຄະນະນຳບໍລິສັດໂດຍດ່ວນເພື່ອແກ້ໄຂຕາມກົດລະບຽບແຮງງານຂອງບໍລິສັດ.

**1.2. ຜົນໄດ້ຮັບ:** ແຕ່ເດືອນ 01/2024 ຫາວັນທີ 31/12/2024, ບໍລິສັດຍັງບໍ່ທັນໄດ້ຮັບບົດລາຍງານທີ່ລະເມີດກ່ຽວກັບການເບິ່ງແຍງສຸຂະພາບແລະຄວາມປອດໄພແຮງງານ.

**2. ແຜນການ 6 ເດືອນຕົ້ນປີ 2025.**

- ຈັດຕັ້ງໂຄສະນາເຜີຍແຜ່ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ ກ່ຽວກັບສິດ ແລະ ພັນທະຂອງຜູ້ອອກແຮງງານ.

- ສືບຕໍ່ຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍ ການເບິ່ງແຍງສຸຂະພາບແລະຄວາມປອດໄພແຮງງານ ໃນແຕ່ລະປີ.

- ບໍລິສັດ ໃຫ້ຄວາມສຳຄັນກັບການຕິດຕາມກວດກາ ແລະກວດພົບການລະເມີດພາຍໃນດ້ວຍຕົນເອງ. ມີການລົງໂທດສຳລັບກໍລະນີທີ່ລະເມີດ.

ຂ້າງເທິງແມ່ນເນື້ອໃນຂອງບົດລາຍງານການຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍການເບິ່ງແຍງສຸຂະພາບ ແລະ ຄວາມປອດໄພແຮງງານໃນປີ 2024.

**ຄະນະ FSC ບໍລິສັດ**

*ບ່ອນນຳສົ່ງ:*

- ຄະນະ ອນກ ບສ;
- ບັນດາພາກສ່ວນທີ່ກ່ຽວຂ້ອງ;
- ຄະນະ FSC ບສ;
- Website ບສ;
- ສຳເນົາຂາອອກ-ຂາເຂົ້າ.

ກະຊວງ ກະສິກຳ ແລະ ປ່າໄມ້ ບໍລິສັດ ດັກລັກ ຣັບເບີ ຈຳກັດ DAKLAK RUBBER CO.,LTD ແຂວງ ຈຳປາສັກ

**ດັ້ງ ດິ່ງ ຟຸ່ງ**

**Dang Dinh Phung**